**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 2130/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 24/09/2020

# <u>ແຈ້ງການ</u>

ຮຽນ: ທ່ານຜູ້ຖືຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງການປ່ຽນແປງຫົວໜ້າພະແນກກວດສອບພາຍໃນ ແລະ ຫົວໜ້າພະແນກບັນຊີ.

- ອີງຕາມຂໍ້ຕົກລົງ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ສະບັບເລກທີ 1380/ຜ-ຟຟລ, ລົງວັນທີ 10 ກໍລະກົດ 2020.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບວ່າ ຜ-ຟຟລ ໄດ້ມີການແຕ່ງຕັ້ງຫົວໜ້າພະແນກກວດສອບພາຍໃນ ແລະ ຫົວໜ້າພະແນກບັນຊີ ຂອງບໍລິສັດຜູ້ໃໝ່ປ່ຽນແທນຜູ້ເກົ່າ. ເນື່ອງຈາກມີການປັບໂຄງຮ່າງການຈັດຕັ້ງພາຍໃນບໍລິສັດ ເພື່ອເຮັດໃຫ້ການຄຸ້ມຄອງບໍລິຫານເປັນໄປຢ່າງຕໍ່ເນື່ອງ ແລະ ສາມາດດໍາເນີນທຸລະກິດເປັນໄປຕາມແຜນການທີ່ວາງໄວ້. ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

1. ແຕ່ງຕັ້ງທ່ານ ນິກອນ ແກ້ວວິໄລ ເປັນຫົວໜ້າພະແນກກວດສອບພາຍໃນຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ ທີ່ໄປຮັບໜ້າທີ່ໃໝ່.
2. ແຕ່ງຕັ້ງທ່ານ ຄໍາຫວາງ ສີສົມຫວັງ ເປັນຫົວໜ້າພະແນກບັນຊີຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ ທີ່ໄປຮັບໜ້າທີ່ໃໝ່.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖື,

**<u>ຜູ້ອໍານວຍການໃຫຍ່</u>**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL-Generation Public Company

ດວງສີ ພາຣາຢົກ

ຖະໜົນມິດຕະພາບລາວ-ໄທ,ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນສປປລາວຕູ້ປ.ນ 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la, ເວັບໄຊສ: www.edlgen.com.la